ອົງການ ສະຫະປະຊາຊາດ NATIONS UNIES

ເລຂາທິການໃຫ່ຍ

--

ສານຈາກທ່ານເລຂາທິການໃຫ່ຍ ສໍາລັບ ວັນອົງການສະຫະປະຊາຊາດ

24 ຕຸລາ 2009

ບໍ່ວ່າຈະເປັນວັນແຫ່ງອົງການສະຫະປະຊາຊາດ ແລະ ວັນໃດໃນຕະຫຼອດປີ, ອົງການ ສະຫະປະຊາຊາດກໍ່ແມ່ນເຮັດວຽກເພື່ອໂລກ, ເພື່ອສ້າງວຽກເຮັດງານທໍາ, ເພື່ອ "ພວກເຮົາທຸກຄົນ".

ພວກເຮົາໃຫ້ການຊ່ວຍເຫຼືອດ້ານມະນຸດສະທໍາຫຼາຍກວ່າອົງການອື່ນໆໃນໂລກ ແລະ ໃນ ຂົງເຂດທີ່ມີຄວາມທຸລະການດານທີ່ສຸດ. ພວກເຮົາສະໜອງວັກແຊ່ງ ໃຫ້ ເດັກນ້ອຍໄດ້ເຖິງ 40 ສ່ວຍຮ້ອຍໃນທົ່ວໂລກ. ພວກເຮົາສະໜອງອາຫານໃຫ້ຄົນຫຼາຍກວ່າ 100 ລ້ານຄົນ ແລະ ຊ່ວຍ ເຫຼືອຊາວອົບພະຍົບຈາກສົງຄາມ ແລະ ລັດຖະປະຫານ ໄດ້ຫຼາຍກວ່າ 30 ລ້ານຄົນ ໂດຍສ່ວນ ສ່ວນໃຫຍ່ແລ້ວແມ່ນແມ່ຍິງ ແລະ ເດັກນ້ອຍ. ພວກເຮົາຈັດຕັ້ງແຈກຢາຍໜ່ວຍງານຮັກສາ ສັນຕິພາບໄດ້ຫຼາຍກວ່າທີ່ເຄີຍມີ - 115,000 ຄົນ. ໃນປີຜ່ານມາພຽງປີດຽວ ພວກເຮົາເຂົ້າໄປ ຊ່ວຍເຫຼືອການເລືອກຕັ້ງໄດ້ເກືອບ 50 ປະເທດ. ແລະ ລະບົບການຈັດຕັ້ງຂອງອົງການສະຫະ ປະຊາຊາດ ສາມາດກອບກູ້ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ກໍ່ຄືຄວາມບໍ່ສະຫງົບ ທາງດ້ານສັງຄົມຂອງໂລກໄດ້.

ປະຊາຊົນທຸກຄົນ ກໍາລັງຈັບຕາເບິ່ງ ອົງການສະຫະປະຊາຊາດ ໃນການຕໍ່ສູ້ກັບຄວາມທຸກ ຍາກ ແລະ ຄວາມອຶດຫິວ, ໃນການຮັກສາສັນຕິພາບ, ໃນການຂະຫຍາຍການສຶກສາໄປສູ່ສັງຄົມ ແລະ ຍືນຂື້ນເພື່ອສິດທິມະນຸດໃນທຸກມູມຂອງໂລກ. ພວກເຂົາກໍາລັງເບິ່ງພວກເຮົາໃນການ ສະກັດກັ້ນການແຜ່ຂະຫຍາຍຂອງການຜະລິດອາວຸດທໍາລາຍລ້າງ, ການລະບາດຂອງພະຍາດ ແລະ ການປົກປ້ອງປະຊາຊົນ ແລະ ຄອບຄົວ ທີ່ອາດຈະຖືກທໍາລາຍຈາກໄພພິບັດ. ໃນເດືອນ ທັນວາ, ພວກເຂົາກໍ່ຍັງຫວັງຈະໄດ້ເຫັນ ພວກເຮົາຮ່ວມມືກັນ ຢ່າງກ້ວາງຂວາງ, ສະເໝີພາບ ແລະ ເປັນຄວາມຫວັງອັນແຮງກ້າ ໃນການຕໍ່ສູ້ເພື່ອສະກັດກັ້ນການປ່ຽນແປງທາງດ້ານດິນຟ້າ

ອາກາດ ແລະ ນັ້ນຄືຄວາມຫວັງທີ່ຈະຊ່ວຍປົກປ້ອງພວກເຮົາທຸກຄົນ ທັງເປັນການປູທາງໄປສູ່ການສ້າງລະບົບເສດຖະກິດທີ່ຂຽວສົດຊື່ນ ແລະ ຍືນຍົງກ່ວາ.

ນີ້ແມ່ນການເຄື່ອນໄຫວທີ່ເປັນໜຶ່ງດຽວໃນໂລກ. ວິກິດການຕ່າງໆ ເຊັ່ນ: ວິກິດການທາງດ້ານສະບຽງອາຫານ, ວິກິດການທາງດ້ານນ້ຳມັນເຊື້ອໄຟ, ວິກິດການທາງດ້ານການເງິນ, ໄຂ້ຫວັດແມ່ນໄດ້ເກີດຂຶ້ນໃນເວລາອັນດຽວກັນ. ສະພາບດິນຟ້າອາກາດເກີດມີການປ່ຽນແປງຮຸນແຮງຂຶ້ນໃນແຕ່ລະວັນ. ແຕ່ລະເຫດການທີ່ເກີດຂື້ນ ລ້ວນແຕ່ແມ່ນ ຄວາມເປັນຈິງແຫ່ງສັດຕະຫວັດທີ21: ພວກເຮົາອາໄສຢູ່ໃນໂລກໜ່ວຍດຽວກັນ. ໃນນາມທີ່ເປັນພົນລະເມືອງ, ເປັນປະເທດ, ເປັນເຜົ່າພັນ, ພວກເຮົາໄດ້ຂຶ້ນເຮືອລຳດຽວກັນ.

ອົງການ ສະຫະປະຊາຊາດ ກຳລັງໃຊ້ທຸກຄວາມສາມາດເພື່ອແກ້ໄຂບັນຫາຕ່າງໆ, ເພື່ອເບິ່ງບັນຫາຕ່າງໆໃນລັກສະນະກວມລວມ. ໃນປະຈຸບັນ ພວກເຮົາກຳລັງສ້າງລະບົບການຮ່ວມກັນຢ່າງຫຼາຍຝ່າຍແບບໃໝ່ ທີ່ສາມາດຕອບສະໜອງຜົນໄດ້ຮັບອັນແທ້ຈິງມາສູ່ທຸກຄົນ, ໂດຍສະເພາະແມ່ນປະຊາຊົນຜູ້ທີ່ມີຖານະຍາກຈົນ. ແຕ່ຂ້າພະເຈົ້າ ກໍ່ມີຄວາມກັງວົນໃຈເມື່ອເຫັນວ່າເປົ້າໝາຍທີ່ວາງໄວ້ ແລະ ການປະຕິບັດຕົວຈິງນັ້ນມັນຍັງມີຄວາມຫ່າງໄກກັນຫຼາຍ.
ເນື່ອງໃນວັນ ແຫ່ງອົງການສະຫະປະຊາຊາດນີ້, ຂ້າພະເຈົ້າຂໍຮຽກຮ້ອງໃຫ້ພວກເຮົາທຸກຄົນຈົ່ງພ້ອມກັນ ເພີ່ມທະວີການຊ່ວຍເຫຼືອຕໍ່ກັບກັບກຸ່ມຄົນຜູ້ທີ່ດ້ອຍໂອກາດ ແລະ ມີຜົນກະທົບງ່າຍ, ກຸ່ມຄົນທີ່ຂາດຄວາມສາມາດ ແລະ ກຸ່ມຄົນທີ່ບໍ່ສາມາດປົກປ້ອງຕົນເອງ ຂຶ້ນອີກຫຼາຍເທົ່າ. ຂໍໃຫ້ພວກເຮົາຈົ່ງຢືນເປັນໜຶ່ງດຽວກັນຕະຫຼອດໄປ – ໂດຍມີເປົ້າໝາຍ ແລະ ໜ້າທີ່ອັນດຽວກັນ, ເພື່ອເຮັດໃຫ້ໂລກມີຄວາມປອດໄພ ແລະ ໜ້າຢູ່ຂື້ນກ່ວາເກົ່າ.